ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈນກ

ເລກທີ:0515/ທສວ

ນະຄອນຫຼວງວຽງຈັນ, ວັນທີ..07..ພຶດສະພາ 2025

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ຂໍເຊີນບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຍື່ນຊອງປະມູນ ສຳລັບການສະໜອງບໍລິການໂຄສະນາ ປະຊາສຳພັນ ວຽກງານຂອງ ທສວ ***ເປັນໄລຍະ 12 ເດືອນ;***
2. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານການປະມູນໄດ້ຢູ່ ທີ່ຊັ້ນ 03, ຫ້ອງ 301 ຂອງສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສຈນກ), ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 410005 021; 020 2309 8876 8876 ໃນໂມງລັດຖະການ (8:30 ໂມງ ຫາ 16:00ໂມງ, ວັນຈັນ ເຖິງ ວັນສຸກ);
3. ການປະມູນ ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຂໍ້ມູນຂ່າວສານ ແລະ ການຕັດຕໍ່ວິດີໂອ, ການສື່ສານ, ການເຄື່ອນໄຫວດ້ານໂປຣແກມຄອມພິວເຕີ ແລະ ບໍລິການຊອບແວ, ໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023, ໃບຢັ້ງຢືນທະນາການເງິນ (ບັນຊີສຳຮອງ) ຂອງບໍລິສັດໄລຍະ 02 ເດືອນທີ່ຜ່ານມາ ວົງເງິນບໍ່ຫຼຸດ 200 ລ້ານກີບຂຶ້ນໄປ;
4. ເອກະສານການປະມູນ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ***(ເລີ່ມແຕ່ວັນທີ ...08.ພຶດສະພາ ຫາ..11... ມິຖຸນາ 2025)*** ໃນລາຄາ ***3,500,000 ກີບ***/1ຊອງ ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນ ***ເງິນສົດ;***
5. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ...12...ມິຖຸນາ 2025 ຢູ່ຊັ້ນ 02, ຫ້ອງປະຊຸມ 201 ຂອງ ສຈນກ ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ (ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ);
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຫຼື ເງິນສົດ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
7. ການປະມູນໃນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງລົງວັນທີ 13 ກຸມພາ 2019./.

**ຜູ້ອຳນວຍການກອງທຶນ**

ປອ. ບຸນເພັງ ສີບຸນເຮືອງ